San Diego City Schools

Fact Sheet

ລະດູໃບໄມ້ລົ່ນ 2003

# ພໍ່ແມ່ຜູ້ຊ່ວຍເຫລືອພໍ່ແມ່ ແລະ ຜູ້ຊ່ວຍເຫລືອຄວາມສຸກທຸກ ຂອງໂຄງການສຶກສາພິເສດ

ໂຄງການພໍ່ແມ່ຊ່ວຍເຫລືອພໍ່ແມ່ ເປັນລັສນະພິເສດຂອງໂຮງຮຽນເຂດສຶກສາເມືອງແຊນດິເອໂກ, ໃນນັ້ນໄດ້ຈັດໃຫ້ມີການຊ່ວຍເຫລືອ ແລະ ຊຸກຍູ້ພໍ່ແມ່ຂອງເດັກທີ່ຮຽກຮ້ອງຕ້ອງການຄວາມຊ່ວຍເຫລືອພິເສດ. ພໍ່ແມ່ຜູ້ຊ່ວຍເຫລືອພໍ່ແມ່ນີ້ ແມ່ນພວກພໍ່ແມ່ຂອງເດັກທີ່ຕ້ອງການຄວາມຊ່ວຍເຫລືອພິເສດ ຊຶ່ງເຂົາເຈົ້າຈະໄດ້ຮັບຂ່າວຄາວ ແລະ ການຝຶກອົບຮົມຕ່າງໆ.

ເປົ້າໝາຍຂອງໂຄງການພໍ່ແມ່ຊ່ວຍເຫລືອພໍ່ແມ່ ນີ້ແມ່ນເພື່ອ:

- ການສນັບສນຸນຊ່ວຍເຫລືອພໍ່ແມ່: ໃຫ້ການຊ່ວຍເຫລືອພໍ່ແມ່ລະຍະການດຳເນີນໂຄງການສຶກສາສ່ວນບຸກຄົນ (**IEP**) ແລະ ໃນກິຈກັມຕ່າງໆໃນໂຮງຮຽນ.
- ການຝຶກອົບຮົມພໍ່ແມ່: ໃຫ້ໂອກາດພໍ່ແມ່ໄດ້ຮັບການອົບຮົມ ເພື່ອຮຽນຮູ້ກ່ຽວກັບຄວາມພິການຕ່າງໆ, ກົດໝາຍກ່ຽວກັບການສຶກສາພິເສດ, ແຫລ່ງຊ່ວຍເຫລືອຕ່າງໆ, ຄວາມແນະນຳເພື່ອຊ່ວຍເຫລືອການຮຽນຢູ່ທີ່ບ້ານ, ແລະ ອີກອື່ນໆຕໍ່ໄປ.
- ການເຂົ້າຮ່ວມພົວພັນຂອງພໍ່ແມ່: ຊ່ວຍເຫລືອພໍ່ແມ່ໃຫ້ເຂົ້າຮ່ວມພົວພັນໃນໂຮງຮຽນຂອງເດັກ ແລະ ໃນກິຈກັມທີ່ກ່ຽວຂ້ອງຕ່າງໆ–ຢູ່ໃນໂຮງຮຽນ.

ພໍ່ແມ່ຜູ້ຊ່ວຍເຫລືອພໍ່ແມ່ໄດ້ເຮັດວຽກຮ່ວມກັບພໍ່ແມ່ ແລະ ພະນັກງານ ເພື່ອຊ່ວຍເຫລືອໃຫ້ນັກຮຽນມີຄວາມກ້າວໜ້າ ແລະ ຮັບຜົນສຳເຣັດ. ເຂົາເຈົ້າໄດ້ປະສົມປະສານ ແບບຢ່າງການສຶກສາຂອງພໍ່ແມ່, ກຳກັບດູແລ ຂ່າວຈາກແຫລ່ງການຊ່ວຍເຫລືອຊຸມຊົນ ກັບພໍ່ແມ່–ໄປຫາພໍ່ແມ່ຄົນອື່ນໆ.

ໂຄງການຊ່ວຍເຫລືອຄວາມສຸກທຸກ ແມ່ນລັສນະພິເສດ ໃຫ້ສູນກາງ ແລະ ດຳເນີນງານ ຊຶ່ງໄດ້ຮັບການສນັບສນຸນຊ່ວຍເຫລືອຈາກພໍ່ແມ່ ແລະ ຫ້ອງການບໍຣິການຊ່ວຍເຫລືອຂອງສະພາສຶກສາ. ບັນຫາຂອງການສຶກສາພິເສດນັ້ນແມ່ນໄດ້ຖືກສືບສວນ ແລະ ແກ້ໄຂໃນແບບຖືກຕ້ອງເໝາະສົມ.

ໜ້າທີ່ຂອງຜູ້ຊ່ວຍເຫລືອຄວາມສຸກທຸກ ຮວມມີ:

- ຕອບສນອງຄຳສອບຖາມຂອງພໍ່ແມ່ ແລະ ພະນັກງານ;
- ແຈ້ງໃຫ້ພໍ່ແມ່ຮູ້ກ່ຽວກັບ ສິດທິຂອງເຂົາເຈົ້າ;
- ສືບສວນເບິ່ງຄວາມຟ້ອງຮ້ອງຕ່າງໆ;
- ຊ່ອຍເຫລືອພໍ່ແມ່ກ່ຽວກັບໂຄງການສຶກສາສ່ວນບຸກຄົນ/ປະຊຸມແຜນບໍຣິການຊ່ວຍເຫລືອສ່ວນຄອບຄົວ (**IEP/IFSP**), ຊ່ອຍປະກອບເຣື່ອງຟ້ອງຮ້ອງ ແລະ ການຮ້ອງທຸກຕ່າງໆ; ແລະ
- ປະຕິບັດຕົນເປັນຜູ້ຕິດຕໍ່ລະຫວ່າງ ພະນັກງານສູນກາງສຶກສາ, ພໍ່ແມ່ ແລະ ອົງການຈັດຕັ້ງຊຸມຊົນ.

ຜູ້ຊ່ວຍຄວາມສຸກທຸກ ເຮັດວຽກກັບພໍ່ແມ່ ແລະ ພະນັກງານສູນກາງສຶກສາ ເພື່ອແກ້ໄຂບັນຫາ ແລະ ຊ່ວຍເຫລືອຄອບຄົວໃຫ້ກ້າວໜ້າໃນຂັ້ນຕໍ່ໆໄປ. ໜ້າທີ່ຂອງເຂົາເຈົ້າແມ່ນເພື່ອສອບສວນ ແລະ ຊ່ອຍແກ້ໄຂບັນຫາຂັດຂ້ອງຕ່າງໆໂດຍສະເພາະເຈາະຈົງ. ຜູ້ຊ່ອຍຄວາມສຸກທຸກນີ້ ອາດຈະໃຫ້ຂ່າວຕ່າງໆທີ່ກ່ຽວຂ້ອງກັບກົດໝາຍການສຶກສາພິເສດ, ກ່ຽວກັບສິດທິ ແລະ ຄວາມຮັບຜິດຊອບຕ່າງໆຂອງພໍ່ແມ່.

## ບົດສລູບ

- ❖ ພໍ່ແມ່ຜູ້ຊ່ວຍເຫລືອພໍ່ແມ່ ໃຫ້ການຊ່ວຍເຫລືອ, ອົບຮົມໃນເຣື່ອງຄວາມສາມາດຂອງເດັກ ແລະ ເຂົ້າຮ່ວມພົວພັນກັບເດັກຂອງເຂົາເຈົ້າຢູ່ໃນໂຮງຮຽນ ແລະ ໃນກິຈກັມຕ່າງໆຂອງໂຮງຮຽນ.
- ❖ ຜູ້ຊ່ວຍເຫລືອຄວາມສຸກທຸກ ສອບສວນບັນຫາຂັດຂ້ອງສ່ວນຕົວ ແລະ ສົ່ງເສີມໃຫ້ປະຕິບັດຖືກຕ້ອງ ໂດຍແນະນຳກຳກັບຕາມລະບົບຂອງບັນຫາກ່ຽວຂ້ອງນັ້ນ.
- ❖ ສອງພາສາ (ພາອັງກິດ ແລະ ສະແປນນິສ) ພະນັກງານພໍ່ແມ່ ແລະ ຜູ້ຊ່ອຍຄວາມສຸກທຸກນີ້ ມີໄວ້ ເພື່ອຊ່ອຍເຫລືອຄອບຄົວຕ່າງໆ.
- ❖ ເພື່ອຕິດຕໍ່ຫາພໍ່ແມ່ຜູ້ຊ່ວຍເຫລືອພໍ່ແມ່ ໂທຣະສັບຫາ ຫ້ອງການໂຄງການສຶກສາພິເສດທີ່ເປັນຕົວແທນເຂດຄວາມຕ້ອງການ ເດັກຂອງທ່ານ ໃນເລກ. (858) 490–8500.
- ❖ ເພື່ອຕິດຕໍ່ຫາຜູ້ຊ່ອຍເຫລືອຄວາມສຸຂທຸຂ ໂທຣະສັບໄປທີ່ (619) 725–8179 ຫລື ໄປຢ້ຽມຢາມເຂົາເຈົ້າ ຢູ່ທີ່ ໂຮງຮຽນປະຖົມສຶກສາເບີນີ (**Birney**), ບ້ງກະໂລ **B-20**.
- ❖ ເລກໂທຣະສັບທີ່ສຳຄັນຕ່າງໆ

| | |
|---|---|
| **Learning Disability** | **(619) 725-7327** |
| **Emotional Disability** | **(619) 725-7652** |
| **Learning/Vision/Physical** | **(858) 490-8451** |
| **ILS/PACE/Inclusion/ TRACE** | **(858) 693-5500** |
| **Riley and New Dawn** | **(858) 496-8205** |
| **Early Childhood** | **(858) 490-8500** |

*ອະພິບັນທະນາການຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: **Parent Support and Board Services Department: (619) 725-5525 or (619) 725-5634**

**Media inquires: (619) 725-5578** **www.sandi.net**

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 138,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລິຟເນັຍ, ມີໂຮງຮຽນຫລາຍກວ່າ 200 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 18,800 ຄົນ.) ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອານ, ວິຊາຂຽນ, ແລະ ວິຊາເລກສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.